ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກົມການຄ້າພາຍໃນ

ພະແນກຄົ້ນຄວ້າ, ວິໄຈ ແລະ ພະຍາກອນ

ເລກທີ 0109 /ກຄພນ.ຄວພ

ນະຄອນຫລວງວຽງຈັນ ວັນທີ: 17 JAN 2018

## ແຈ້ງການ

ເຖິງ: ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ໃນຂອບເຂດທົ່ວປະເທດ.

ເລື່ອງ: ຕິດຕາມ, ເກັບກຳຂໍ້ມູນ ແລະ ສົມທຽບລາຄາຂາຍຍ່ອຍສິນຄ້າທີ່ກະທົບໄວຕໍ່ຊີວິດການເປັນຢູ່ ປະຈຳວັນ ຂອງປະຊາຊົນ (ບັນຊີ "ກ"), ກັບຕ່າງປະເທດທີ່ຕິດຈອດຊາຍແດນ.

- ອີງຕາມ, ດຳລັດເລກທີ 474/ນຍ, ລົງວັນທີ 18/11/2010, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ.
- ອີງຕາມ, ແຈ້ງການເລກທີ 898/ຫສນຍ.ກລຂ, ລົງວັນທີ 22/06/2017, ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ວ່າດ້ວຍການຮັບຮອງເອົາການຄຸ້ມຄອງລາຄາສິນຄ້າ, ຄ່າບໍລິການ ແລະ ມາດຕະການແກ້ໄຂ ເພື່ອຫຼຸດຜ່ອນຕົ້ນທຶນການຜະລິດ ແລະ ການດຳລົງຊີວິດຂອງປະຊາຊົນ.

ກົມການຄ້າພາຍໃນ ກະຊວງ ອຸດສາຫະກຳ ແລະ ການຄ້າ, ຂໍຖືເປັນກຽດແຈ້ງມາຍັງ ບັນດາພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ, ໂດຍສະເພາະແມ່ນແຂວງ ທີ່ມີຊາຍແດນຕິດຈອດກັບຕ່າງປະເທດ ໃຫ້ຕິດຕາມ, ເກັບກຳ ແລະ ສົມທຽບລາຄາຂາຍຍ່ອຍສິນຄ້າ ທີ່ກະທົບໄວຕໍ່ຊີວິດການເປັນຢູ່ປະຈຳວັນຂອງປະຊາຊົນ ລວມ 08 ປະເພດ ຈານວນ 23 ລາຍການຢູ່ໃນບັນຊີ "ກ" (ມີຕາຕະລາງບັນຊີ "ກ" ຄັດຕິດມາພ້ອມ).

<u>ຕົວຢ່າງ:</u> ນະຄອນຫລວງ ສົມທຽບກັບ ຈັງຫວັດໜອງຄາຍ, ບໍລິຄຳໄຊ ສົມທຽບກັບ ຈັງຫວັດບຶງການ... ຜົ້ງສາລີ ສົມທຽບກັບ ປະເທດຈີນ, ເຊກອງ ສົມທຽບກັບ ປະເທດຫວຽດນາມ ແລະ ແຂວງອື່ນໆ...

- ການເກັບກຳ ແລະ ສົມທຽບໃຫ້ຖືເອົາອາທິດທີ່ 03 ຂອງເດືອນ ແລະ ລາຍງານ ໃຫ້ກົມການຄ້າພາຍໃນ ກ່ອນວັນທີ 20 ຂອງທຸກໆເດືອນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າກົມ

ກະຊວງອຸດສາຫະກຳ ແລະ ການຄ້າ ກົມການຄ້າພາຍໃນ

ບຸນທຽນ ແກ້ວສີພາ

ບ່ອນຕິດຕໍ່ສອບຖາມ:

ທ່ານ ວິໄລພອນ ແກ້ວມະນີຈັນ 020 96188695